# ການຊ່ວຍເຫຼືອສຳລັບການດັດປັບທາງການຄ້າ
# ການບໍລິການຝຶກອົບຮົມຢູ່ກັບໜ້າວຽກ

WE ARE YOUR DOL

NEW YORK STATE OF OPPORTUNITY. | Department of Labor

## ສ້າງຄວາມສາມາດແຂ່ງຂັນໃນຕະຫຼາດ!

ທ່ານອາດຈະມີສິດເຂົ້າຮ່ວມໂຄງການຊ່ວຍເຫຼືອສຳລັບການດັດປັບທາງການຄ້າ (Trade Adjustment Assistance, TAA) ເພາະວ່າທ່ານເປັນອະດີດລູກຈ້າງຂອງທຸລະກິດທີ່ຖືກກະທົບທາງການຄ້າ. ໜຶ່ງໃນຜົນປະໂຫຍດທີ່ມີໃຫ້ທ່ານແມ່ນການຝຶກອົບຮົມຢູ່ກັບໜ້າວຽກ (OJT):

### OJT ແມ່ນຫຍັງ?

ໄດ້ຄ່າຈ້າງໃນຂະນະທີ່ທ່ານຮຽນຮູ້ວຽກ - ຄ່າຈ້າງເຕັມເວລາ ແລະ ທັກສະໃໝ່.
ການຝຶກອົບຮົມແບບແນະນຳເຮັດຕົວຈິງ ແລະ/ຫຼື ແບບຢູ່ໃນຫ້ອງຮຽນ ຫຼື ທາງອອນລາຍທີ່ສະໜັບສະໜູນຄວາມຕ້ອງການດ້ານການຝຶກອົບຮົມຂອງທຸລະກິດຕ່າງໆ.

### ມັນເປັນແນວໃດ?

OJT ຈັບຄູ່ທຸລະກິດກັບຜູ້ຊອກວຽກເຮັດທີ່ມີຄຸນສົມບັດຄົບຖ້ວນຜູ້ທີ່ກະຕືລືລົ້ນຢາກເຮັດວຽກ, ແຕ່ຕ້ອງການການຝຶກອົບຮົມສະເພາະທາງທີ່ນາຍຈ້າງເທົ່ານັ້ນສາມາດສະໜອງໃຫ້ໄດ້.

### ຊ່ວງເວລາເປັນແນວໃດ?

ການຝຶກອົບຮົມທີ່ TAA ອະນຸມັດສູງເຖິງ 104 ອາທິດ.

### ມັນຈ່າຍຫຍັງໃຫ້ແດ່?

ໃນລະຫວ່າງການຝຶກອົບຮົມ, TAA ຈະຈ່າຍທົດແທນໃຫ້ທຸລະກິດ 50% ຂອງຄ່າຈ້າງຄົນງານສຳລັບໄລຍະເວລາຂອງການຝຶກອົບຮົມ. ເມື່ອຈັບຄູ່ກັບກອງທຶນ Workforce Innovation and Opportunity Act (WIOA), ສາມາດຈ່າຍທົດແທນຕື່ມອີກ 25% ໃຫ້ແກ່ທຸລະກິດ. (50% TAA + 25% WIOA =75%)

TAA ຈະຈ່າຍຄ່າສິດສອນ ແລະ ຄ່າຝຶກອົບຮົມຂອງທ່ານເພື່ອໄດ້ຮັບທັກສະທີ່ຈຳເປັນສຳລັບວຽກເຮັດຂອງທ່ານ.

### ສຳລັບຂໍ້ມູນເພີ່ມເຕີມ ຕິດຕ

ຜູ້ຊ່ຽວຊານ TAA: ______________________

ໂທລະສັບ: ______________________

ອີເມວ: ______________________





ພະແນກແຮງງານລັດ New York ແມ່ນນາຍຈ້າງ/ໂຄງການທີ່ໃຫ້ໂອກາດເທົ່າທຽມກັນ. ອຸປະກອນຊ່ວຍ ແລະ ການບໍລິການຊ່ວຍເຫຼືອແມ່ນມີໃຫ້ແກ່ບຸກຄົນທີ່ມີຄວາມພິການຕາມຄຳຂໍ.

NEW YORK STATE OF OPPORTUNITY. | Department of Labor